ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 777/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2021

# ຂໍ້ຕົກລົງ
# ວ່າດ້ວຍການທົດລອງດຳເນີນກິດຈະການຊື້-ຂາຍເງິນຄຣິບໂຕ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກໍາຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 09 ພະຈິກ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1158/ຫສນຍ, ລົງວັນທີ 09 ກັນຍາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງຄະນະຮັບຜິດຊອບຄົ້ນຄວ້າ ແລະ ສ້າງນິຕິກໍາກ່ຽວກັບການຄຸ້ມຄອງຊື້-ຂາຍຊັບສິນດິຈິຕອນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດໍາເນີນກິດຈະການຊື້-ຂາຍເງິນຄຣິບໂຕໄລຍະທົດລອງ ເພື່ອເຮັດໃຫ້ການຄຸ້ມຄອງ, ບໍລິຫານຄວາມສ່ຽງ ແລະ ການດໍາເນີນງານກ່ຽວກັບການຊື້-ຂາຍເງິນຄຣິບໂຕ ມີຄວາມໝັ້ນຄົງ, ປອດໄພ, ໜ້າເຊື່ອຖື ແລະ ມີປະສິດທິພາບ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ໃຊ້ບໍລິການ ປະກອບສ່ວນເຂົ້າໃນການພັດທະນາລະບົບສະຖາບັນການເງິນ-ເງິນຕາ ກໍຄືການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການດຳເນີນກິດຈະການຊື້-ຂາຍເງິນຄຣິບໂຕ**

ການດຳເນີນກິດຈະການຊື້-ຂາຍເງິນຄຣິບໂຕ ແມ່ນ ການດາເນີນກິດຈະການບໍລິການຊື້-ຂາຍ, ແລກປ່ຽນເງິນຄຣິບໂຕ ຢູ່ໃນສູນຊື້-ຂາຍເງິນຄຣິບໂຕ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມທັງຜູ້ຂຸດຄົ້ນເງິນຄຣິບໂຕ ທີ່ສະໝັກເປັນສະມາຊິກ, ເປີດບັນຊີຊື້-ຂາຍ ນຳສູນຊື້-ຂາຍເງິນຄຣິບໂຕ.

2. **ຜູ້ຂຸດຄົ້ນເງິນຄຣິບໂຕ** ແມ່ນ ຜູ້ດຳເນີນກິດຈະການ ທີ່ນຳໃຊ້ຊັບພະຍາກອນຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກ ເພື່ອຢັ້ງຢືນທຸລະກຳໃຫ້ລະບົບ ຫຼື ຄຳນວນສົມຜົນຄະນິດສາດ ແລ້ວໄດ້ຜົນຕອບແທນເປັນຫົວໜ່ວຍເງິນຄຣິບໂຕ.

3. **ຊັບສິນດິຈິຕອນ (Digital Asset)** ໝາຍເຖິງ ຊັບສິນທີ່ຖືກສ້າງຂຶ້ນດ້ວຍຂໍ້ມູນທາງເອເລັກໂຕຣນິກ ເພື່ອເປັນຕົວກາງໃນການແລກປ່ຽນ, ຊື້-ຂາຍ ດ້ວຍກັນ. ຊັບສິນດິຈິຕອນແບ່ງອອກເປັນ 2 ປະເພດ ຄື:

ກ. **ເງິນຄຣິບໂຕ (Crypto Currency):** ແມ່ນຂໍ້ມູນດິຈິຕອນທີ່ຖືກສ້າງຂຶ້ນດ້ວຍຂໍ້ມູນທາງເອເລັກໂຕຣນິກ ເພື່ອໃຫ້ເປັນຕົວກາງໃນການແລກປ່ຽນ ຫຼື ຊື້-ຂາຍ ດ້ວຍກັນ.

ຂ. **ຫຼຽນໂທເຄັນດິຈິຕອນ (Digital Token)** ແມ່ນຂໍ້ມູນເອເລັກໂຕຣນິກທີ່ສ້າງຂຶ້ນ ເປັນລະບົບຫຼຽນດິຈິຕອນ ເພື່ອໃຊ້ງານສະເພາະຈຸດປະສົງຢ່າງໃດຢ່າງໜຶ່ງຂອງຜູ້ສ້າງຫຼຽນ ຫຼື ກຳນົດສິດຂອງບຸກຄົນໃນການຮັບສິນຄ້າ, ການບໍລິການ ຫຼື ການຮ່ວມລົງທຶນ ເຊິ່ງແບ່ງອອກເປັນ 2 ປະເພດ ຫຼັກ ຄື: ໂທເຄັນດິຈິຕອນ ເພື່ອການລົງທຶນ (Investment Token) ແລະ ໂທເຄັນດິຈິຕອນ ເພື່ອການໃຊ້ປະໂຫຍດ (Utility Token)

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການດຳເນີນກິດຈະການຊື້-ຂາຍເງິນຄຣິບໂຕ ຢູ່ ສປປ ລາວ.

## ພາກທີ II
## ສູນຊື້-ຂາຍເງິນຄຣິບໂຕ ແລະ ການຂໍອະນຸຍາດສ້າງຕັ້ງ
### ໝວດທີ 1
### ສູນຊື້-ຂາຍເງິນຄຣິບໂຕ

**ມາດຕາ 5 ສູນຊື້-ຂາຍເງິນຄຣິບໂຕ**

ສູນຊື້-ຂາຍເງິນຄຣິບໂຕ (Crypto Currency Trading Platform): ໝາຍເຖິງລະບົບຖານ (Platform) ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ບໍລິການຊື້-ຂາຍ ຫຼື ແລກປ່ຽນ ຊັບສິນດິຈິຕອນ ຫຼື ອຳນວຍຄວາມສະດວກໃຫ້ຜູ້ໃຊ້ບໍລິການ ທີ່ມີຄວາມຕ້ອງການຊື້-ຂາຍ ຫຼື ແລກປ່ຽນຊັບສິນດິຈິຕອນ ສາມາດຕົກລົງ ຫຼື ຈັບຄູ່ເຮັດທຸລະກຳນຳກັນໄດ້.

ສູນຊື້-ຂາຍເງິນຄຣິບໂຕ ແມ່ນວິສາຫະກິດທີ່ສ້າງຕັ້ງຂຶ້ນໃນຮູບແບບບໍລິສັດຈຳກັດ, ເປັນສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ**

ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ມີດັ່ງນີ້:

1. ສູນຊື້-ຂາຍ ເງິນຄຣິບໂຕ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ;

2. ທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ທີ່ຮ່ວມມືກັບສູນຊື້-ຂາຍເງິນຄຣິບໂຕ ໃນການອຳນວຍຄວາມສະດວກໃຫ້ແກ່ຜູ້ໃຊ້ບໍລິການ ຫຼື ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ການເປີດບັນຊີເງິນຝາກ, ການບໍລິການໂອນເງິນ, ການຊຳລະເງິນ ຫຼື ການແລກປ່ຽນເງິນຕາຕ່າງປະເທດ;

3. ຜູ້ໃຊ້ບໍລິການ (End User) ຜູ້ໃຊ້ບໍລິການທີ່ມີເງື່ອນໄຂຄົບຖ້ວນ ແລະ ສະໝັກໃຈເຂົ້າໃຊ້ບໍລິການສູນຊື້-ຂາຍເງິນຄຣິບໂຕ ໂດຍມີການຄຳນຶງເຖິງຄວາມສ່ຽງໃນການລົງທຶນ;

4. ຜູ້ເຂົ້າຮ່ວມອື່ນໆ ຕາມການກຳນົດຂອງ ທະນາຄານແຫ່ງ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດ ແລະ ການພິຈາລະນາສ້າງສູນຊື້-ຂາຍເງິນຄຣິບໂຕ

**ມາດຕາ 7 ການຂໍອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ພິຈາລະນາອະນຸຍາດສ້າງສູນຊື້-ຂາຍເງິນຄຣິບໂຕ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດ ພ້ອມດ້ວຍເອກະສານກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນ ມາຍັງ ທະນາຄານແຫ່ງ ສປປ ລາວ ພິຈາລະນາອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ.

ເງື່ອນໄຂ ແລະ ເອກະສານປະກອບໃນການຂໍອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021 ແລະ ມາດຕາ 8 ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8 ເງື່ອນໄຂການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີເງື່ອນໄຂພື້ນຖານຕາມທີ່ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021 ແລະ ມີເງື່ອນໄຂເພີ່ມຕື່ມ ດັ່ງນີ້:

1. ເປັນບໍລິສັດ ທີ່ຂຶ້ນທະບຽນວິສາຫະກິດໃນ ສປປ ລາວ ສະເພາະດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ເທົ່ານັ້ນ;

2. ມີທຶນຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້;

3. ມີຜູ້ຖືຮຸ້ນ ທີ່ຖືສັນຊາດລາວ ຖືຮຸ້ນຢ່າງໜ້ອຍ ຫ້າສິບເອັດສ່ວນຮ້ອຍ (51%) ຂອງຈຳນວນຮຸ້ນທັງໝົດ;

4. ມີຜູ້ບໍລິຫານ ທີ່ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ ສປປ ລາວ ຢ່າງໜ້ອຍ ໜຶ່ງຄົນ;

5. ມີແຜນການດຳເນີນທຸລະກິດໃນໄລຍະ ສາມປີ ຕໍ່ໜ້າ;

6. ມີການຮ່ວມມື ແລະ ລະບົບການເຊື່ອມຕໍ່ກັບທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ເອກະສານປະກອບການຂໍອະນຸຍາດ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕຕ້ອງມີເອກະສານປະກອບການຂໍອະນຸຍາດ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;

2. ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;

3. ໜັງສືແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງ ໃນກໍລະນີມອບໝາຍໃຫ້ຜູ້ຕາງໜ້າ ເປັນຜູ້ຮັບຜິດຊອບໃນການຂໍສ້າງຕັ້ງ ຕ້ອງມີໃບມອບສິດຢ່າງຖືກຕ້ອງຕາມກົດໝາຍ;

4. ໜັງສືຍິນຍອມໃຫ້ ທະນາຄານແຫ່ງ ສປປ ລາວ ສາມາດກວດສອບ ດັ່ງນີ້:

4.1. ໜີ້ສິນຢູ່ລະບົບທະນາຄານພາຍໃນ ແລະ ຕ່າງປະເທດ;

4.2. ແຫຼ່ງທຶນທີ່ຈະນໍາມາລົງທຶນສ້າງຕັ້ງຂອງຜູ້ຖືຮຸ້ນ;

4.3. ປະຫວັດຂອງຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ.

5. ຮ່າງກົດລະບຽບຂອງສູນຊື້-ຂາຍເງິນຄຣິບໂຕທີ່ມີເນື້ອໃນຢ່າງໜ້ອຍ ດັ່ງນີ້:

5.1. ໂຄງປະກອບການຈັດຕັ້ງ;

5.2. ໂຄງປະກອບຜູ້ຖືຮຸ້ນ;

5.3. ການຄຸ້ມຄອງບໍລິຫານ;

5.4. ກອງປະຊຸມ ແລະ ວິທີລົງມະຕິ;

5.5. ວຽກງານບັນຊີ ແລະ ການກວດສອບ;

5.6. ການແກ້ໄຂຂໍ້ຂັດແຍ່ງ;

5.7. ການຍຸບເລີກ ແລະ ການຊໍາລະສະສາງ (Liquidation);

5.8. ເນື້ອໃນອື່ນຕາມທີ່ໄດ້ກໍານົດຢູ່ໃນກົດໝາຍ.

6. ມະຕິກອງປະຊຸມຂອງຜູ້ຖືຮຸ້ນ ສ້າງຕັ້ງ ແລະ ການແຕ່ງຕັ້ງສະພາບໍລິຫານ ແລະ ອໍານວຍການ;

7. ບັນຊີລາຍຊື່ຂອງຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ;

8. ເອກະສານຢັ້ງຢືນຖານະການເງິນຂອງຜູ້ຖືຮຸ້ນ ໂດຍໄດ້ຮັບການກວດສອບຈາກອົງການກວດສອບພາຍນອກ ສາມປີ ຍ້ອນຫຼັງ;

9. ເອກະສານປະກອບອື່ນໆ ເປັນພາສາລາວ ດັ່ງນີ້:

9.1. ຂໍ້ມູນທົ່ວໄປ;

9.1.1. ຊີວະປະຫວັດຫຍໍ້ຂອງຜູ້ບໍລິຫານ;

9.1.2. ໃບຢັ້ງຢືນທີ່ຢູ່ຂອງຜູ້ບໍລິຫານ;

9.1.3. ໃບຢັ້ງຢືນແຫຼ່ງທີ່ມາຂອງທຶນ;

9.1.4. ສໍາເນົາໃບທະບຽນວິສາຫະກິດ;

9.1.5. ໃບແຈ້ງໂທດ ແລະ/ຫຼື ໃບຢັ້ງຢືນຈາກສານປະຊາຊົນທີ່ມີອາຍຸບໍ່ເກີນ ສາມ ເດືອນ.

9.2. ຂໍ້ມູນການໃຫ້ບໍລິການຂອງສູນຊື້-ຂາຍເງິນຄຣິບໂຕ;

9.3. ລະບຽບການ ແລະ ມາດຕະຖານ ກ່ຽວກັບການຮັກສາຄວາມໝັ້ນຄົງປອດໄພທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຊຶ່ງຢ່າງໜ້ອຍຕ້ອງມີມາດຕະຖານຕາມລະບຽບການກ່ຽວກັບມາດຕະການການຮັກສາຄວາມໝັ້ນຄົງປອດໄພທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງທະນາຄານແຫ່ງ ສປປ ລາວ;

9.4. ແຜນການດໍາເນີນທຸລະກິດ ກ່ຽວກັບການໃຫ້ສູນຊື້-ຂາຍເງິນຄຣິບໂຕ ໃນໄລຍະເວລາ ສາມ ປີ (Feasibility Study);

9.5. ແຜນການຈັດຕັ້ງປະຕິບັດ ຮອງຮັບການດໍາເນີນທຸລະກິດ ໂດຍສະແດງລາຍລະອຽດການກະກຽມໃນແຕ່ລະໄລຍະເວລາ (Timeline) ຖ້າມີ;

9.6. ລະບຽບການກ່ຽວກັບການບໍລິຫານຄວາມສ່ຽງ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ຄື: ປະເພດຄວາມສ່ຽງຕົ້ນຕໍ, ການປະເມີນຄວາມສ່ຽງໃນການໃຫ້ບໍລິການ ໂດຍລະບຸຕົວຊີ້ວັດຄວາມສ່ຽງທີ່ສໍາຄັນ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວຂ້ອງ ລວມທັງຂະບວນການບໍລິຫານ ແລະ ຈັດການຄວາມສ່ຽງຕົ້ນຕໍ ທີ່ຄອບຄຸມເຖິງວິທີການຊີ້ວັດ, ຄວບຄຸມ, ຕິດຕາມ ແລະ ບໍລິຫານຈັດການຄວາມສ່ຽງຕົ້ນຕໍ ຂອງຜູ້ໃຫ້ບໍລິການຊໍາລະ;

9.7. ການວິເຄາະຜົນກະທົບ (Business Impact Analysis = BIA) ແລະ ການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (Business Continuity Management = BCM) ໂດຍກຳນົດຜູ້ຮັບຜິດຊອບ ແລະ ລາຍລະອຽດການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດໃຫ້ເໝາະສົມກັບປະເພດ ແລະ ຄວາມສະຫຼັບສັບຊ້ອນ (Complexity) ຂອງການບໍລິການທີ່ຕົນໃຫ້ບໍລິການ ຊຶ່ງມີເນື້ອໃນ ດັ່ງນີ້:

9.7.1. ກຳນົດນະໂຍບາຍ ການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (Business Continuity Management = BCM);

9.7.2. ແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (Business Continuity Planning = BCP);

9.7.3. ກຳນົດແນວທາງການຕິດຕາມ, ການປະເມີນຜົນ ແລະ ແນວທາງການທົດສອບແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ.

9.8. ລະບົບການຄວບຄຸມພາຍໃນ (Internal Control) ຊຶ່ງກວມເອົາການກວດສອບລາຍການຜິດປົກກະຕິ ໂດຍລະບຸໜ້າທີ່ຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຄວບຄຸມ ແລະ ກວດສອບການດຳເນີນງານ;

9.9. ແນວທາງ ແລະ ລາຍລະອຽດການໃຊ້ບໍລິການ ຈາກຜູ້ໃຫ້ບໍລິການພາຍນອກ ມາດຳເນີນງານແທນທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ລວມທັງລະບົບທີ່ມີຜົນກະທົບທີ່ສຳຄັນຕໍ່ການໃຫ້ບໍລິການຂອງຕົນ;

9.10. ນະໂຍບາຍ ແລະ ມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ສຳນັກງານຂໍ້ມູນຕ້ານການຟອກເງິນ ກຳນົດໃນແຕ່ລະໄລຍະ;

9.11. ລະບຽບການກ່ຽວກັບ ການປົກປ້ອງຜູ້ໃຊ້ບໍລິການ ເປັນຕົ້ນ ລະບຽບການໃຫ້ບໍລິການ, ການເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ແລະ ການແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 10 ທຶນຈົດທະບຽນ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕຕ້ອງມີທຶນຈົດທະບຽນ ຢ່າງໜ້ອຍ ສິບລ້ານໂດລາສະຫະລັດ ໂດຍຕ້ອງຖອກ ຫ້າລ້ານ ໂດລາສະຫະລັດ ເປັນເງິນຄໍ້າປະກັນໄວ້ຢູ່ ທະນາຄານແຫ່ງ ສປປ ລາວ. ເງິນຄໍ້າປະກັນດັ່ງກ່າວແມ່ນສາມາດນຳໃຊ້ໄດ້ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ.

ທຶນຈົດທະບຽນທີ່ເຫຼືອຈາກເງິນຄໍ້າປະກັນ ແມ່ນນຳໃຊ້ເຂົ້າໃນການກະກຽມຄວາມພ້ອມໃນການໃຫ້ບໍລິການ ຫຼື ການເຄື່ອນໄຫວອື່ນ ໂດຍມີແຜນນຳໃຊ້ທຶນດັ່ງກ່າວຢ່າງລະອຽດ ແລະ ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການພິຈາລະນາ ແລະ ການອອກໃບອະນຸຍາດ**

1. ການພິຈາລະນາຂໍອະນຸຍາດ

ທະນາຄານແຫ່ງ ສປປ ລາວ ຕ້ອງພິຈາລະນາການຂໍອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ແຈ້ງຕອບເຫັນດີທາງດ້ານຫຼັກການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍອະນຸຍາດ ຖ້າເຫັນວ່າມີຄວາມຈຳເປັນ ທະນາຄານແຫ່ງ ສປປ ລາວ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມຈາກຜູ້ທີ່ມີຈຸດປະສົງຂໍອະນຸຍາດ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ.

2. ການອອກໃບອະນຸຍາດ

ພາຍຫຼັງໄດ້ຮັບໜັງສືແຈ້ງຕອບເຫັນດີທາງດ້ານຫຼັກການ ຜູ້ທີ່ມີຈຸດປະສົງຂໍອະນຸຍາດສູນຊື້-ຂາຍເງິນຄຣິບໂຕຕ້ອງປະຕິບັດເງື່ອນໄຂຄົບຖ້ວນພາຍໃນ ເກົ້າສິບວັນ ດັ່ງນີ້:

2.1. ຈ່າຍຄ່າລິຂະສິດໃນການອອກໃບອະນຸຍາດຈຳນວນ ໜຶ່ງລ້ານ ໂດລາສະຫະລັດ ໃຫ້ແກ່ ກະຊວງການເງິນ;

2.2. ປະກອບທຶນຈົດທະບຽນຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

2.3. ມີສຳນັກງານ ແລະ ອຸປະກອນຮັບໃຊ້ການດຳເນີນທຸລະກິດ ທີ່ເໝາະສົມ;

2.4. ມີລະບົບດຳເນີນງານ ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ສາມາດຕອບສະໜອງການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ໄດ້ຮັບໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງລະບົບຊື້-ຂາຍເງິນຄຣິບໂຕຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

2.5. ປະກອບພະນັກງານທີ່ໄດ້ມາດຕະຖານ ໃນຈຳນວນພຽງພໍ;

2.6. ມີເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ແກ່ຜູ້ທີ່ມີຈຸດປະສົງຂໍອະນຸຍາດສູນຊື້-ຂາຍເງິນຄຣິບໂຕ ໄດ້ປະຕິບັດເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້ຄົບຖ້ວນ ແລະ ຕ້ອງເຄື່ອນໄຫວທຸລະກິດພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ.

ກໍລະນີ ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຫາກບໍ່ສາມາດປະຕິບັດເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້ ໂດຍມີເຫດຜົນພຽງພໍ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເພີ່ມເວລາການປະຕິບັດເງື່ອນໄຂໃຫ້ອີກ ສີ່ສິບຫ້າວັນ. ຫາກບໍ່ມີເຫດຜົນພຽງພໍ ການຂໍອະນຸຍາດກໍຈະຕົກໄປ.

**ມາດຕາ 12 ການນຳໃຊ້ ແລະ ອາຍຸການນຳໃຊ້**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງນຳໃຊ້ໃບອະນຸຍາດດຳເນີນທຸລະກິດໃຫ້ຖືກຕ້ອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໂດຍບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ແທນ.

ໃບອະນຸຍາດມີອາຍຸການນຳໃຊ້ ສາມປີ ສາມາດຕໍ່ອາຍຸການນຳໃຊ້ໄດ້ຕາມນະໂຍບາຍຂອງລັດຖະບານ ຊຶ່ງສູນຊື້-ຂາຍເງິນຄຣິບໂຕ ທີ່ມີຈຸດປະສົງສືບຕໍ່ໃຫ້ບໍລິການ ຕ້ອງຍື່ນຄຳຮ້ອງຕໍ່ ທະນາຄານແຫ່ງ ສປປ ລາວ ຢ່າງໜ້ອຍ ສີ່ສິບຫ້າວັນ ເພື່ອພິຈາລະນາກ່ອນໝົດອາຍຸການນຳໃຊ້.

ທະນາຄານແຫ່ງ ສປປ ລາວ ມີສິດຕໍ່ໃບອະນຸຍາດ, ສັ່ງໂຈະ, ຢຸດຕິ, ຍົກເລີກໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຕາມການຕົກລົງເຫັນດີ, ມະຕິ ຫຼື ຄຳສັ່ງຂອງລັດຖະບານ.

**ມາດຕາ 13 ການເຜີຍແຜ່ຕໍ່ມວນຊົນ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະກາດກ່ຽວກັບການອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ມວນຊົນຊາບໂດຍຜ່ານສື່ມວນຊົນ ຢ່າງໜ້ອຍ ຫ້າວັນ ລັດຖະການ ຢ່າງຕໍ່ເນື່ອງ ນັບແຕ່ວັນໄດ້ຮັບອະນຸຍາດ ເປັນຕົ້ນໄປ.

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງເປີດເຜີຍ ຫຼື ສະແດງ ໃບອະນຸຍາດຢູ່ສຳນັກງານຂອງຕົນ, ທາງເອເລັກໂຕຣນິກ ໂດຍສະເພາະບ່ອນທີ່ຜູ້ໃຊ້ບໍລິການ ຫຼື ຜູ້ພົວພັນວຽກງານອື່ນ ເຫັນຢ່າງຊັດເຈນ ຕະຫຼອດອາຍຸການນຳໃຊ້.

**ມາດຕາ 14 ຄ່າບໍລິການຄົ້ນຄວ້າ, ຄ່າທຳນຽມ ແລະ ຄ່າຄຸ້ມຄອງປະຈຳປີ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຫຼື ສູນຊື້-ຂາຍເງິນຄຣິບໂຕ ຕ້ອງຊຳລະຄ່າບໍລິການຄົ້ນຄວ້າ, ຄ່າທຳນຽມ ແລະ ຄ່າຄຸ້ມຄອງປະຈຳປີ ໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ຢູ່ກົມບໍລິການທະນາຄານ ດັ່ງນີ້:

1. ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຕ້ອງຊຳລະຄ່າບໍລິການຄົ້ນຄວ້າການຂໍອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຈຳນວນ ຊາວລ້ານ ກີບ ແລະ ຕ້ອງຊຳລະໃນວັນທີ່ຍື່ນຄຳຮ້ອງ;

2. ສູນຊື້-ຂາຍເງິນຄຣິບໂຕ ຕ້ອງຊຳລະຄ່າທຳນຽມອອກໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຈຳນວນ ຫ້າລ້ານ ກີບ ແລະ ຕ້ອງຊຳລະໃນວັນທີ່ໄດ້ຮັບໃບອະນຸຍາດ;

3. ສູນຊື້-ຂາຍເງິນຄຣິບໂຕທີ່ຕ້ອງການຕໍ່ໃບອະນຸຍາດ ຕ້ອງຊຳລະຄ່າບໍລິການຄົ້ນຄວ້າ ຈຳນວນ ໜຶ່ງລ້ານ ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະໃນວັນທີ່ຍື່ນຄຳຮ້ອງ;

4. ສູນຊື້-ຂາຍເງິນຄຣິບໂຕ ຕ້ອງຊໍາລະຄ່າຄຸ້ມຄອງປະຈໍາປີ ຈໍານວນ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງລາຍຮັບທັງໝົດປະຈໍາປີ. ຄ່າຄຸ້ມຄອງປະຈໍາປີ ແມ່ນເລີ່ມເກັບແຕ່ປີໄດ້ຮັບອະນຸຍາດ ເປັນຕົ້ນໄປ ໂດຍຄິດໄລ່ຕາມຈໍານວນເດືອນ ທີ່ໄດ້ຮັບອະນຸຍາດໃນປີນັ້ນ ແລະ ຕ້ອງຊໍາລະໃນໄຕມາດທີໜຶ່ງ ຂອງປີຖັດໄປ.

# ພາກທີ III
# ການດໍາເນີນງານຂອງສູນຊື້-ຂາຍເງິນຄຣິບໂຕ

**ມາດຕາ 15 ການດໍາເນີນງານຂອງສູນຊື້-ຂາຍ ເງິນຄຣິບໂຕ**

ການດໍາເນີນງານຂອງສູນຊື້-ຂາຍເງິນຄຣິບໂຕຕ້ອງປະຕິບັດຫຼັກການ ດັ່ງນີ້:

1. ຄວາມໝັ້ນຄົງທາງການເງິນ;

2. ການຄຸ້ມຄອງບໍລິຫານ;

3. ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ;

4. ການປົກປ້ອງຜູ້ໃຊ້ບໍລິການ;

5. ການຊອກຮູ້ລູກຄ້າ ແລະ ມາດຕະການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## ໝວດທີ 1
## ຄວາມໝັ້ນຄົງທາງການເງິນ ແລະ ການຄຸ້ມຄອງບໍລິຫານ

**ມາດຕາ 16 ຄວາມໝັ້ນຄົງທາງການເງິນ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີຖານະການເງິນທີ່ໝັ້ນຄົງ ແລະ ພຽງພໍ ໃນການດໍາເນີນທຸລະກິດ ແລະ ຮັບປະກັນການຊື້-ຂາຍເງິນຄຣິບໂຕ ໄດ້ຢ່າງຕໍ່ເນື່ອງ.

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງຮັບປະກັນໃຫ້ຕົນມີຖານະການເງິນ ດັ່ງນີ້:

1. ມີທຶນຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້;

1.1. ກໍລະນີ ທຶນຈົດທະບຽນມີຈໍານວນຫຼາຍກວ່າ ສາມາດຫຼຸດທຶນດັ່ງກ່າວໄດ້ ໂດຍໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

1.2. ກໍລະນີ ເພີ່ມທຶນຈົດທະບຽນ ຕ້ອງແຈ້ງຕໍ່ທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນສໍາເລັດການຈົດທະບຽນເພີ່ມທຶນດັ່ງກ່າວ ເປັນຕົ້ນໄປ.

2. ມີຖານະການເງິນ ແລະ ການດໍາເນີນງານທີ່ໝັ້ນຄົງ ຊຶ່ງສະແດງໃຫ້ເຫັນວ່າ ສາມາດດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ໄດ້ຢ່າງຕໍ່ເນື່ອງ ແລະ ບໍ່ມີຄວາມສ່ຽງທີ່ອາດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຜູ້ໃຊ້ບໍລິການ ເປັນຕົ້ນ ຖານະທາງການເງິນ, ແຫຼ່ງທຶນເງິນຕາຕ່າງປະເທດ, ການດໍາເນີນທຸລະກິດ ແລະ ສ່ວນຂອງຜູ້ຖືຮຸ້ນ;

3. ຕ້ອງຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ. ກໍລະນີ ຕ້ອງການສ້າງ, ນໍາໃຊ້ໂປຣແກຣມບັນຊີ ແລະ/ຫຼື ເພີ່ມບັນຊີໃດໜຶ່ງໃນຜັງບັນຊີ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 17 ການຄຸ້ມຄອງບໍລິຫານ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານ ດັ່ງນີ້:

1. ເງື່ອນໄຂການດໍາເນີນທຸລະກິດ;

2. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ;

3. ການຄວບຄຸມພາຍໃນ;

4. ການປ່ຽນແປງອໍານາດການຄວບຄຸມກິດຈະການ.

**ມາດຕາ 18 ເງື່ອນໄຂການດໍາເນີນທຸລະກິດ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດຕາມເງື່ອນໄຂການດໍາເນີນທຸລະກິດ ເພື່ອຮັບປະກັນການດໍາເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ດັ່ງນີ້:

1. ດໍາເນີນທຸລະກິດ ໂດຍປະຕິບັດຕາມແຜນການ, ນະໂຍບາຍ, ມາດຕະການ ແລະ ລະບົບຕ່າງໆ ຕາມຮູບແບບການຂໍອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2. ຄຸ້ມຄອງ ແລະ ທົບທວນ ມາດຕະຖານ, ເງື່ອນໄຂ ແລະ ຄຸນສົມບັດ ຂອງຜູ້ບໍລິຫານ ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;

3. ມີຜູ້ບໍລິຫານທີ່ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້. ກໍລະນີ, ຜູ້ບໍລິຫານດັ່ງກ່າວພົ້ນອອກຈາກຕໍາແໜ່ງ ຕ້ອງແຕ່ງຕັ້ງຜູ້ທີ່ຄົບເງື່ອນໄຂມາປ່ຽນແທນ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ຜູ້ກ່ຽວພົ້ນຈາກຕໍາແໜ່ງ ເປັນຕົ້ນໄປ;

4. ລາຍງານກ່ຽວກັບການປ່ຽນແປງຜູ້ບໍລິຫານ ຕໍ່ທະນາຄານແຫ່ງ ສປປ ລາວ ຊາບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ;

5. ປະຕິບັດສິດ ແລະ ພັນທະ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ**

ຜູ້ບໍລິຫານ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ກໍານົດແຜນຍຸດທະສາດ, ນະໂຍບາຍ ແລະ ແຜນການດໍາເນີນທຸລະກິດ ພ້ອມທັງຈັດຕັ້ງເຜີຍແຜ່ແຜນການດັ່ງກ່າວ ໃຫ້ແກ່ພະນັກງານຂອງຕົນ;

2. ເປັນເຈົ້າການໃນການບໍລິຫານຄວາມສ່ຽງ ຄື:

2.1. ກໍານົດນະໂຍບາຍ ແລະ ມາດຕະການບໍລິຫານຄວາມສ່ຽງ ທີ່ມີປະສິດທິພາບ ເພື່ອຮອງຮັບຄວາມສ່ຽງທີ່ສໍາຄັນຕ່າງໆ ໂດຍຄໍານຶງເຖິງຮູບແບບຄວາມສະຫຼັບສັບຊ້ອນ ແລະ ຍຸດທະສາດໃນການດໍາເນີນທຸລະກິດ ພ້ອມທັງທົບທວນນະໂຍບາຍ ແລະ ມາດຕະການດັ່ງກ່າວ ຢ່າງເປັນປະຈໍາ ຫຼື ທຸກຄັ້ງທີ່ມີເຫດການ ຫຼື ມີການປ່ຽນແປງ ທີ່ອາດສົ່ງຜົນກະທົບຕໍ່ການໃຫ້ບໍລິການທີ່ສໍາຄັນ;

2.2. ຕິດຕາມ ແລະ ປະເມີນຜົນ ຂອງການປະເມີນຄວາມສ່ຽງ, ຜົນໄດ້ຮັບຈາກການດໍາເນີນທຸລະກິດ ທຽບກັບແຜນການບໍລິຫານຄວາມສ່ຽງ, ລະດັບຄວາມສ່ຽງ ຫຼື ແນວໂນ້ມຄວາມສ່ຽງທີ່ອາດຈະເກີດຂຶ້ນ;

3. ສ້າງລະບົບການຄວບຄຸມພາຍໃນ ໂດຍມີການທົບທວນ, ດຸ່ນດ່ຽງອໍານາດຢ່າງເໝາະສົມ ແລະ ກໍານົດໃຫ້ມີບຸກຄະລາກອນ ຫຼື ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບ ການບໍລິຫານຄວາມສ່ຽງ ແລະ ກວດສອບ ເພື່ອເຮັດໃຫ້ການດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ສ້າງລະບົບລາຍງານການດຳເນີນທຸລະກິດ ທີ່ເປັນການລະເມີດລະບຽບກົດໝາຍ, ລະບຽບການຂອງຜູ້ຄຸ້ມຄອງ ແລະ ລະບຽບການບໍລິຫານພາຍໃນຂອງຕົນ ເພື່ອເຮັດໃຫ້ຜູ້ບໍລິຫານ ຫຼື ໜ່ວຍງານທີ່ກ່ຽວຂ້ອງສາມາດຕິດຕາມ ຫຼື ແກ້ໄຂ ເພື່ອບໍ່ໃຫ້ເກີດຄວາມເສຍຫາຍ ຫຼື ຜົນກະທົບຕໍ່ການດຳເນີນທຸລະກິດ;

5. ກຳນົດວິທີການຈົດບັນທຶກ, ເກັບຮັກສາບັນຊີ ແລະ ເອກະສານທີ່ກ່ຽວຂ້ອງ ເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນທຸລະກິດ ທີ່ແທ້ຈິງຂອງສູນຊື້-ຂາຍເງິນຄຣິບໂຕ;

6. ກຳນົດວິທີການປ້ອງກັນຄວາມສ່ຽງການເໜັງຕີງຂອງເງິນຕາຕ່າງປະເທດ;

7. ກຳນົດກົນໄກ, ແຫຼ່ງທຶນເພື່ອຮອງຮັບການໄລ່ລຽງ ແລະ ຫັກບັນຊີ ເປັນເງິນຕາຕ່າງປະເທດ ສຳລັບການຂໍຖອນເງິນກັບຄືນປະເທດຂອງຜູ້ໃຊ້ບໍລິການທີ່ບໍ່ມີພູມລຳເນົາຢູ່ ສປປ ລາວ (Non-Resident User) ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ການຄວບຄຸມພາຍໃນ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີລະບົບການຄວບຄຸມພາຍໃນຂອງຕົນ ຢ່າງເປັນລາຍລັກອັກສອນ ດັ່ງນີ້:

1. ໂຄງປະກອບການຈັດຕັ້ງ ທີ່ມີລະບົບການກວດສອບ, ດຸ່ນດ່ຽງອຳນາດຕາມຫຼັກການຄຸ້ມຄອງບໍລິຫານ ແລະ ມີການແບ່ງຄວາມຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງຢ່າງຈະແຈ້ງ ເພື່ອຮອງຮັບໃຫ້ແກ່ການຄຸ້ມຄອງ, ບໍລິຫານ, ຄວບຄຸມ, ລາຍງານ ແລະ ກວດສອບ ການດຳເນີນທຸລະກິດ;

2. ກົນໄກການຄວບຄຸມພາຍໃນ ເປັນຕົ້ນ ການກວດສອບລາຍການຜິດປົກກະຕິ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜິດພາດ, ການສໍ້ໂກງໃນການປະຕິບັດໜ້າທີ່, ການບໍລິຫານຄວາມສ່ຽງທີ່ບໍ່ເໝາະສົມ ແລະ ບໍ່ຮັດກຸມພຽງພໍ, ການບໍ່ປະຕິບັດກົດລະບຽບການບໍລິຫານພາຍໃນຂອງຕົນ ຫຼື ກົດໝາຍທີ່ກ່ຽວຂ້ອງ;

3. ການແຕ່ງຕັ້ງພະນັກງານຮັບຜິດຊອບ ຫຼື ໜ່ວຍງານທີ່ປະຕິບັດໜ້າທີ່ຕິດຕາມກວດກາ ທີ່ມີຄວາມຮູ້, ປະສົບການ ແລະ ມີຄວາມເປັນເອກະລາດ ຈາກໜ່ວຍງານທີ່ປະຕິບັດໜ້າທີ່ຄວບຄຸມພາຍໃນ ແລະ ບໍລິຫານຄວາມສ່ຽງ ເພື່ອ:

3.1. ຕິດຕາມກວດກາການດຳເນີນງານ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

3.2. ດຳເນີນການກວດສອບບັນຊີ ແລະ ການກວດສອບທາງດ້ານເຕັກໂນໂລຊີ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ໂດຍບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກວດສອບ. ການຈັດຕັ້ງປະຕິບັດ ແມ່ນເລີ່ມໃນປີຖັດໄປນັບແຕ່ປີທີ່ໄດ້ຮັບອະນຸຍາດ. ພາຍຫຼັງສຳເລັດການກວດສອບແຕ່ລະຄັ້ງ ຕ້ອງລາຍງານຜົນການກວດສອບ ໂດຍຜ່ານການຮັບຮອງຈາກຜູ້ບໍລິຫານ ຕໍ່ທະນາຄານແຫ່ງ ສປປ ລາວ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ສຳເລັດການກວດສອບ ເປັນຕົ້ນໄປ;

3.3. ກໍລະນີເຫັນວ່າ ຜົນການກວດສອບຕາມຂໍ້ 3.2 ມີຂໍ້ມູນບໍ່ຄົບຖ້ວນ, ບໍ່ຈະແຈ້ງ ຫຼື ກໍລະນີຈຳເປັນ ທະນາຄານແຫ່ງ ສປປ ລາວ ສາມາດສັ່ງໃຫ້ສູນຊື້-ຂາຍເງິນຄຣິບໂຕແຕ່ງຕັ້ງຜູ້ກວດສອບພາຍນອກດຳເນີນການກວດສອບ ແລະ ລາຍງານຜົນການກວດສອບ ໃຫ້ທະນາຄານແຫ່ງ ສປປ ລາວ ໂດຍໃຫ້ສູນຊື້-ຂາຍເງິນຄຣິບໂຕ ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດສອບດັ່ງກ່າວ.

**ມາດຕາ 21 ການປ່ຽນແປງອຳນາດການຄວບຄຸມກິດຈະການ**

ຜູ້ຖືຮຸ້ນໃດໜຶ່ງ ມີຈຸດປະສົງຂາຍ ຫຼື ໂອນ ຮຸ້ນທີ່ມີສິດອອກສຽງຂອງຕົນ ຊຶ່ງເຮັດໃຫ້ມີການປ່ຽນແປງອຳນາດ ຫຼື ເຮັດໃຫ້ມີບຸກຄົນໃດໜຶ່ງ ມີສິດອອກສຽງ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງຂອງສູນຊື້-ຂາຍເງິນຄຣິບໂຕ ຕ້ອງສະເໜີຂໍຄຳເຫັນຈາກ ທະນາຄານແຫ່ງ ສປປ ລາວ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພ້ອມທັງຊີ້ແຈງລາຍລະອຽດການຈັດຕັ້ງປະຕິບັດ, ມີການປະເມີນຜົນກະທົບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ ຕໍ່ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ. ທະນາຄານແຫ່ງ ສປປ

ລາວ ຈະພິຈາລະນາ ເຫັນດີ, ປະຕິເສດ ຫຼື ເຫັນດີໂດຍມີເງື່ອນໄຂ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ. ກໍລະນີ ສູນຊື້-ຂາຍເງິນຄຣິບໂຕດຳເນີນການບໍ່ເປັນໄປຕາມຄວາມຈິງ ຫຼື ບໍ່ປະຕິບັດຕາມເງື່ອນໄຂຈະຖືກສັ່ງໂຈະຊົ່ວຄາວ ຫຼື ຍົກເລີກການຕົກລົງເຫັນດີດັ່ງກ່າວ ຕາມພາຍຫຼັງ.

## ໝວດທີ 2
## ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ

**ມາດຕາ 22 ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງກຳນົດການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ ໃນການດຳເນີນທຸລະກິດໃຫ້ສອດຄ່ອງກັບຮູບແບບ, ຂະໜາດ, ປະລິມານທຸລະກຳ ແລະ ອັດຕາການເໜັງຕີງຂອງເງິນຄຣິບໂຕ ທີ່ຕົນໃຫ້ບໍລິການຊື້-ຂາຍໄວ້ຢ່າງເປັນລາຍລັກອັກສອນ ໂດຍຜ່ານການຮັບຮອງຈາກຜູ້ບໍລິຫານ ຊຶ່ງປະຕິບັດ ດັ່ງນີ້:

1. ການກຳນົດນະໂຍບາຍບໍລິຫານຄວາມສ່ຽງ;
2. ການຮັກສາຄວາມປອດໄພທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ;
3. ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ;
4. ການປ່ຽນແປງການດຳເນີນທຸລະກິດ;
5. ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດເຫດຂັດຂ້ອງໃນການໃຫ້ບໍລິການຊຳລະ.

**ມາດຕາ 23 ການກຳນົດນະໂຍບາຍບໍລິຫານຄວາມສ່ຽງ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງກຳນົດນະໂຍບາຍບໍລິຫານຄວາມສ່ຽງທີ່ກ່ຽວກັບການໃຫ້ບໍລິການຂອງຕົນຢ່າງເໝາະສົມ ໂດຍສະເພາະ ການບໍລິຫານຄວາມສ່ຽງທາງດ້ານການເງິນ-ສະພາບຄ່ອງ, ເງິນຕາຕ່າງປະເທດ ດັ່ງນີ້:

1. ສາມາດກຸ້ມຕົນເອງທາງດ້ານແຫຼ່ງທຶນເງິນຕາຕ່າງປະເທດ;

2. ມີການຮ່ວມມືກັບທະນາຄານທຸລະກິດຄູ່ຮ່ວມສັນຍາໃນການສະໜອງແຫຼ່ງທຶນເງິນຕາຕ່າງປະເທດ ເພື່ອຮອງຮັບການຫັກບັນຊີໃຫ້ແກ່ ສູນຊື້-ຂາຍເງິນຄຣິບໂຕ;

3. ມີກົນໄກໃນປ້ອງກັນຄວາມສ່ຽງການເໜັງຕີງຂອງອັດຕາແລກປ່ຽນ (Foreign Exchange Rate Hedging);

4. ມີລະບຽບການໃນການອະນຸຍາດໃຫ້ຖອນເງິນຄືນອອກຈາກລະບົບຂອງສູນຊື້-ຂາຍເງິນຄຣິບໂຕ ຢ່າງຈະແຈ້ງ ຄື:

4.1 ຜູ້ໃຊ້ບໍລິການທີ່ມີພູມລຳເນົາຢູ່ ສປປ ລາວ ແລະ ນຳເງິນກີບເຂົ້າໄປໃຊ້ບໍລິການສາມາດຖອນເງິນອອກຈາກບັນຊີເປັນເງິນກີບເທົ່ານັ້ນ. ກໍລະນີຕ້ອງການແລກປ່ຽນເປັນເງິນຕາຕ່າງປະເທດ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບການແລກປ່ຽນເງິນຕາຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວກຳນົດອອກແຕ່ລະໄລຍະ;

4.2 ຜູ້ໃຊ້ບໍລິການທີ່ບໍ່ມີພູມລຳເນົາຢູ່ ສປປ ລາວ ແລະ ນຳເງິນຕາເຂົ້າໄປໃຊ້ບໍລິການສາມາດຖອນເງິນອອກຈາກບັນຊີເປັນເງິນຕາຕ່າງປະເທດ ເພື່ອເຂົ້າບັນຊີທະນາຄານ ຕາມສະກຸນເງິນທີ່ໄດ້ນຳເຂົ້າໄປໃຊ້ບໍລິການໃນເບື້ອງຕົ້ນ. ກໍລະນີຕ້ອງການແລກປ່ຽນເປັນເງິນຕາຕ່າງປະເທດສະກຸນເງິນອື່ນ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບການແລກປ່ຽນເງິນຕາຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກແຕ່ລະໄລຍະ.

5. ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີກົນໄກໃນການຊອກຫາແຫຼ່ງທຶນເງິນຕາຕ່າງປະເທດ ຮ່ວມກັບທະນາຄານທຸລະກິດທີ່ຮ່ວມມືກັນ ເພື່ອຮອງຮັບການຂໍຖອນເງິນຄືນ, ສິ່ງກຳໄລ ໄປຕ່າງປະເທດຂອງຜູ້ໃຊ້ບໍລິການທີ່

ບໍ່ມີພູມລຳເນົາຢູ່ ສປປ ລາວ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງກັບການຄຸ້ມຄອງເງິນຕາຕ່າງປະເທດ ຂອງ ສປປ ລາວ.

**ມາດຕາ 24 ການຮັກສາຄວາມປອດໄພທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດຕາມລະບຽບການຮັກສາຄວາມປອດໄພທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ຂອງທະນາຄານແຫ່ງ ສປປ ລາວ ພ້ອມທັງມີການກວດສອບຄວາມ ປອດໄພທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ມີຄວາມໝັ້ນຄົງປອດໄພ (Security), ມີຄວາມຖືກຕ້ອງໜ້າເຊື່ອຖືໄດ້ (Integrity), ມີຄວາມພ້ອມໃນການດຳເນີນທຸລະກິດໄດ້ຢ່າງຕໍ່ເນື່ອງ (Availability) ແລະ ຕ້ອງມີການກວດສອບໂດຍຜູ້ກວດສອບ ທີ່ມີຄວາມຮູ້, ຄວາມສາມາດ, ປະສົບການ ແລະ ເປັນອິດສະຫຼະຈາກໜ່ວຍງານທີ່ປະຕິບັດໜ້າທີ່ທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອດຳເນີນການກວດສອບ, ປະເມີນຄວາມສ່ຽງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ລາຍງານຜົນຕໍ່ຜູ້ບໍລິຫານຮັບຮອງ ພ້ອມສຳເນົາບົດລາຍງານດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ສຳເລັດການກວດສອບ ເປັນຕົ້ນໄປ.

ກໍລະນີເຫັນວ່າ ຜົນການກວດສອບດັ່ງກ່າວ ມີຂໍ້ມູນບໍ່ຄົບຖ້ວນ, ບໍ່ຈະແຈ້ງ ຫຼື ກໍລະນີຈຳເປັນ ທະນາຄານແຫ່ງ ສປປ ລາວ ສາມາດສະເໜີໃຫ້ສູນຊື້-ຂາຍເງິນຄຣິບໂຕ ແຕ່ງຕັ້ງຜູ້ກວດສອບພາຍນອກ ດຳເນີນການກວດສອບ ແລະ ລາຍງານຜົນການກວດສອບ ໃຫ້ທະນາຄານແຫ່ງ ສປປ ລາວ ໂດຍສູນຊື້-ຂາຍເງິນຄຣິບໂຕ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດສອບດັ່ງກ່າວ.

**ມາດຕາ 25 ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ**

ສູນຊື້-ຂາຍເງິນຄຣິບໂຕ ສາມາດໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ເພື່ອຊ່ວຍໃນການບໍລິຫານຈັດການລະບົບເຕັກໂນໂລຊີຂໍ້ມູນຂ່າວສານໃດໜຶ່ງຂອງຕົນ ຊຶ່ງສູນຊື້-ຂາຍເງິນຄຣິບໂຕມີຄວາມຮັບຜິດຊອບຕໍ່ຜູ້ໃຊ້ບໍລິການ ໃນການໃຫ້ບໍລິການທີ່ຕໍ່ເນື່ອງ, ປອດໄພ, ໜ້າເຊື່ອຖື ແລະ ຄວາມເສຍຫາຍອື່ນທີ່ອາດເກີດຂຶ້ນຄືກັນກັບຕົນເອງເປັນຜູ້ບໍລິຫານລະບົບດັ່ງກ່າວ.

ສູນຊື້-ຂາຍເງິນຄຣິບໂຕ ທີ່ໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ຕ້ອງປະຕິບັດ ດັ່ງນີ້:

1. ມີລະບຽບການຄັດເລືອກ, ຕິດຕາມ, ປະເມີນຜົນ ແລະ ກວດສອບ ການໃຫ້ບໍລິການຂອງຜູ້ໃຫ້ບໍລິການພາຍນອກ ຢ່າງເໝາະສົມ ໂດຍປະເມີນຄວາມສ່ຽງຂອງການໃຊ້ບໍລິການ ຢ່າງສະໝໍ່າສະເໝີ ພ້ອມທັງການປະເມີນຄວາມສ່ຽງ ກ່ຽວຂ້ອງກັບການຮັກສາຄວາມລັບ, ການຄຸ້ມຄອງຂໍ້ມູນສ່ວນບຸກຄົນ (Data Privacy) ແລະ ຜົນກະທົບຕໍ່ການດຳເນີນທຸລະກິດ;

2. ມີແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (BCP) ຫຼື ແຜນສຸກເສີນດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (Disaster Recovery Plan = DRP) ກ່ຽວກັບການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ພ້ອມທັງຮັບປະກັນໃຫ້ມີການທົດລອງ ແລະ ທົບທວນການຈັດຕັ້ງປະຕິບັດຕາມແຜນຢ່າງເປັນປົກກະຕິ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນດັ່ງກ່າວໄດ້;

3. ກໍລະນີ ມີການເລືອກໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ຈາກຕ່າງປະເທດ ໂດຍສະເພາະການຈັດເກັບຂໍ້ມູນ, ການປະມວນຜົນ ຫຼື ການດຳເນີນການໃດໜຶ່ງ ກ່ຽວຂ້ອງກັບຂໍ້ມູນສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີການປະເມີນຄວາມສ່ຽງທີ່ອາດຈະເກີດຂຶ້ນ ເປັນຕົ້ນ ຄວາມສ່ຽງໃນການບໍ່ສາມາດເຂົ້າເຖິງຂໍ້ມູນອັນເນື່ອງມາຈາກຄວາມຂັດຂ້ອງ ຫຼື ການປິດກັ້ນເຄືອຂ່າຍສື່ສານ ຫຼື ລະບົບສື່ສານລະຫວ່າງປະເທດ (Information Access Risk) ແລະ ຄວາມສ່ຽງດ້ານກົດໝາຍທີ່ກ່ຽວກັບ ການປະຕິບັດຕາມຫຼັກການຂອງຕ່າງປະເທດ (Cross Border Compliance) ແລະ ແຜນຮອງຮັບຄວາມສ່ຽງທີ່ອາດຈະເກີດຂຶ້ນດັ່ງກ່າວ.

**ມາດຕາ 26 ການປ່ຽນແປງການດຳເນີນທຸລະກິດ**

ສູນຊື້-ຂາຍເງິນຄຣິບໂຕ ທີ່ມີຈຸດປະສົງປ່ຽນແປງການດຳເນີນທຸລະກິດ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຕ້ອງປະຕິບັດ ດັ່ງນີ້:

1. ການເພີ່ມບໍລິການໃໝ່ ຫຼື ການຍົກເລີກບໍລິການເກົ່າ ແມ່ນໃຫ້ຍື່ນຄຳຮ້ອງຂໍອະນຸຍາດ ໂດຍຄັດຕິດຂໍ້ມູນ ແລະ ເອກະສານປະກອບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ທະນາຄານແຫ່ງ ສປປ ລາວ ກ່ອນເລີ່ມດຳເນີນການ. ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເຫັນດີ, ປະຕິເສດ ຫຼື ເຫັນດີໂດຍມີເງື່ອນໄຂ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ກໍລະນີ ສູນຊື້-ຂາຍເງິນຄຣິບໂຕ ເຄື່ອນໄຫວບໍ່ເປັນໄປຕາມຄວາມຈິງ ຫຼື ບໍ່ປະຕິບັດຕາມເງື່ອນໄຂຈະຖືກສັ່ງໂຈະຊົ່ວຄາວ ຫຼື ຍົກເລີກການຕົກລົງເຫັນດີດັ່ງກ່າວ ຕາມພາຍຫຼັງ;

2. ການຍົກຍ້າຍສຳນັກງານໃຫຍ່ ແມ່ນໃຫ້ຍື່ນຄຳຮ້ອງຂໍອະນຸຍາດ ໂດຍຄັດຕິດຂໍ້ມູນ ແລະ ເອກະສານປະກອບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ທະນາຄານແຫ່ງ ສປປ ລາວ ກ່ອນເລີ່ມດຳເນີນການ. ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເຫັນດີ, ປະຕິເສດ ຫຼື ເຫັນດີໂດຍມີເງື່ອນໄຂ ພາຍໃນເວລາສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ກໍລະນີສູນຊື້-ຂາຍເງິນຄຣິບໂຕ ເຄື່ອນໄຫວບໍ່ເປັນໄປຕາມຄວາມຈິງ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ຈະຖືກສັ່ງໂຈະຊົ່ວຄາວ ຫຼື ຍົກເລີກການຕົກລົງເຫັນດີດັ່ງກ່າວ ຕາມພາຍຫຼັງ;

3. ການປ່ຽນແປງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ແຈ້ງຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ທະນາຄານແຫ່ງ ສປປ ລາວ ຄື:

3.1. ການປ່ຽນແປງລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ສຳຄັນ ຫຼື ມີຜົນກະທົບຕໍ່ການຮັກສາຄວາມໝັ້ນຄົງປອດໄພຂອງສູນຊື້-ຂາຍເງິນຄຣິບໂຕ ຈາກທີ່ເຄີຍໄດ້ແຈ້ງໄວ້ນຳທະນາຄານແຫ່ງ ສປປ ລາວ ຫຼື ໄດ້ຮັບອະນຸຍາດ ຢ່າງໜ້ອຍ ສິບຫ້າວັນ ໂດຍຄັດຕິດຂໍ້ມູນລາຍລະອຽດທັງໝົດຂອງເຕັກໂນໂລຊີການດຳເນີນທຸລະກິດ, ສ່ວນທີ່ມີການປ່ຽນແປງທີ່ສຳຄັນ ແລະ ການປະເມີນຜົນກະທົບດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ;

3.2. ການປ່ຽນແປງຊື່ຂອງສູນຊື້-ຂາຍເງິນຄຣິບໂຕ ຢ່າງໜ້ອຍ ເຈັດວັນ ກ່ອນການປ່ຽນແປງ.

4. ການປ່ຽນແປງ ຫຼື ປັບປຸງ ແຜນໃນການບໍລິຫານຄວາມສ່ຽງດ້ານຕ່າງໆ ໃຫ້ລາຍງານຕໍ່ທະນາຄານແຫ່ງ ສປປ ລາວ ຊາບ ຢ່າງໜ້ອຍ ສິບຫ້າວັນ ກ່ອນການຈັດຕັ້ງປະຕິບັດ.

**ມາດຕາ 27 ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດເຫດຂັດຂ້ອງຂອງສູນຊື້-ຂາຍເງິນຄຣິບໂຕ**

ສູນຊື້-ຂາຍເງິນຄຣິບໂຕ ທີ່ມີການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດເຫດຂັດຂ້ອງໃນການໃຫ້ບໍລິການຕ້ອງປະຕິບັດ ດັ່ງນີ້:

1. ການຢຸດໃຫ້ບໍລິການຊົ່ວຄາວ ທີ່ມີການກະກຽມໄວ້ລ່ວງໜ້າ ເປັນຕົ້ນ ການປິດປັບປຸງລະບົບທີ່ສຳຄັນ ຊຶ່ງສົ່ງຜົນກະທົບໃນວົງກວ້າງ:

1.1. ແຈ້ງ ທະນາຄານແຫ່ງ ສປປ ລາວ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຢ່າງໜ້ອຍ ສິບຫ້າວັນ ກ່ອນເລີ່ມດຳເນີນການ;

1.2. ແຈ້ງໃຫ້ຜູ້ໃຊ້ບໍລິການ ຜ່ານທາງເອເລັກໂຕຣນິກ, ເປັນລາຍລັກອັກສອນ ແລະ ພາຫະນະສື່ມວນຊົນ ທີ່ເຮັດໃຫ້ຜູ້ໃຊ້ບໍລິການສາມາດຮັບຮູ້ໄດ້ ຢ່າງໜ້ອຍ ເຈັດວັນ ກ່ອນເລີ່ມດຳເນີນການ.

2. ການຢຸດຊົ່ວຄາວ ຫຼື ເກີດເຫດຂັດຂ້ອງ ໃນການໃຫ້ບໍລິການ ຊຶ່ງສົ່ງຜົນກະທົບໃນວົງກວ້າງ ທີ່ບໍ່ມີການກະກຽມໄວ້ລ່ວງໜ້າ ຕ້ອງລາຍງານຕໍ່ຜູ້ບໍລິຫານຕົນຊາບ ແລະ ຕ້ອງປະຕິບັດ ຄື:

2.1. ແຈ້ງ ທະນາຄານແຫ່ງ ສປປ ລາວ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຊາບທັນທີ ເມື່ອຢຸດ ຫຼື ຮັບຮູ້ເຫດຂັດຂ້ອງ ໃນການດຳເນີນງານໂດຍແຈ້ງສາເຫດ ແລະ ການແກ້ໄຂບັນ ຫາເພີ່ມເຕີມພາຍຫຼັງ;

2.2. ແຈ້ງຜູ້ໃຊ້ບໍລິການ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ແລະ ພາຫະນະສື່ມວນຊົນ ຫຼື ຕິດປະກາດໃນສຳນັກງານ ເພື່ອເຮັດໃຫ້ຜູ້ໃຊ້ບໍລິການ ສາມາດຮັບຮູ້ໄດ້ຢ່າງໄວວາ ນັບແຕ່ເວລາທີ່ຢຸດ ຫຼື ຮັບຮູ້ເຫດຂັດຂ້ອງ ໃນການໃຫ້ບໍລິການ ໂດຍແຈ້ງສາເຫດ ແລະ ການແກ້ໄຂບັນຫາເພີ່ມເຕີມພາຍຫຼັງ.

## ໝວດທີ 3
## ການປົກປ້ອງຜູ້ໃຊ້ບໍລິການ

### ມາດຕາ 28 ການປົກປ້ອງຜູ້ໃຊ້ບໍລິການ

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງດຳເນີນການປົກປ້ອງຜູ້ໃຊ້ບໍລິການຂອງຕົນ ດ້ວຍວິທີການ ດັ່ງນີ້:

1. ການກຳນົດລະບຽບການໃຫ້ບໍລິການ;
2. ການເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ;
3. ການເປີດເຜີຍຄ່າທຳນຽມ;
4. ການແກ້ໄຂຂໍ້ຂັດແຍ່ງ.

### ມາດຕາ 29 ການກຳນົດລະບຽບການໃຫ້ບໍລິການ

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງກຳນົດລະບຽບການໃຫ້ບໍລິການ ແລະ ການຄຸ້ມຄອງຜູ້ໃຊ້ບໍລິການ ຢ່າງເປັນລາຍລັກອັກສອນ ແລະ ເປີດເຜີຍລະບຽບການດັ່ງກ່າວ ໃຫ້ຜູ້ໃຊ້ບໍລິການຂອງຕົນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເງື່ອນໄຂ ແລະ ຂັ້ນຕອນ ສຳລັບການສະເໜີເຂົ້າໃຊ້ບໍລິການ, ການໂຈະ, ການຖອນ ຫຼື ຮັບເຂົ້າໃຊ້ບໍລິການຄືນໃໝ່;
2. ການອອກຫຼັກຖານຢັ້ງຢືນການດຳເນີນທຸລະກຳ;
3. ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ;
4. ຄວາມສ່ຽງຂອງການລົງທຶນ ແລະ ການດຳເນີນທຸລະກຳ.

ກໍລະນີ ມີການປ່ຽນແປງລະບຽບການໃຫ້ບໍລິການ, ສູນຊື້-ຂາຍເງິນຄຣິບໂຕ ຕ້ອງແຈ້ງໃຫ້ຜູ້ໃຊ້ບໍລິການຂອງຕົນ ຜ່ານທາງເອເລັກໂຕຣນິກ ຫຼື ແຈ້ງເປັນລາຍລັກອັກສອນ ຢ່າງໜ້ອຍ ສາມສິບວັນ ກ່ອນມີຜົນບັງຄັບໃຊ້.

### ມາດຕາ 30 ການເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ (Data Privacy)

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງກຳນົດລະບຽບການເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໄວ້ຢ່າງເປັນລາຍລັກອັກສອນ ໂດຍກຳນົດລະດັບຊັ້ນຄວາມລັບໃນການເຂົ້າເຖິງຂໍ້ມູນ ແລະ ການລະບຸຕົວບຸກຄົນທີ່ມີສິດເຂົ້າເຖິງຂໍ້ມູນດັ່ງກ່າວ ພ້ອມທັງໃຫ້ມີລະບົບການຈັດເກັບຂໍ້ມູນ ທີ່ຖືກຕ້ອງ, ເຊື່ອຖືໄດ້ ແລະ ປ້ອງກັນຜູ້ທີ່ບໍ່ມີໜ້າທີ່ກ່ຽວຂ້ອງ ເຂົ້າເຖິງ ຫຼື ແກ້ໄຂຂໍ້ມູນດັ່ງກ່າວ.

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງເກັບຮັກສາຄວາມລັບຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ເປີດເຜີຍຂໍ້ມູນເຫຼົ່ານັ້ນ ຕະຫຼອດໄລຍະເວລາການໃຊ້ບໍລິການ ແລະ ພາຍຫຼັງທີ່ຢຸດໃຊ້ບໍລິການແລ້ວ ຍົກເວັ້ນກໍລະນີໃດໜຶ່ງ ດັ່ງນີ້:

1. ການເປີດເຜີຍໂດຍໄດ້ຮັບການເຫັນດີຈາກຜູ້ໃຊ້ບໍລິການ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ;

2. ການເປີດເຜີຍເພື່ອປະໂຫຍດແກ່ການສືບສວນ-ສອບສວນ ຫຼື ການດຳເນີນຄະດີ;

3. ການເປີດເຜີຍແກ່ຜູ້ກວດສອບບັນຊີ;

4. ການເປີດເຜີຍເພື່ອປະໂຫຍດໃນການກຳນົດນະໂຍບາຍ ແລະ ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ;

5. ການເປີດເຜີຍເພື່ອປະໂຫຍດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ການເປີດເຜີຍຄ່າທຳນຽມ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີເງື່ອນໄຂໃນການໃຊ້ບໍລິການຢ່າງຈະແຈ້ງ, ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງລາຍງານລາຍລະອຽດຄ່າທຳນຽມ, ພັນທະຂອງຜູ້ໃຊ້ບໍລິການທຸກປະເພດ ທີ່ສູນຊື້-ຂາຍເງິນຄຣິບໂຕເປັນຜູ້ເກັບກຳຈາກຜູ້ໃຊ້ບໍລິການ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ແລະ ເປີດເຜີຍຕໍ່ຜູ້ໃຊ້ບໍລິການ ຜ່ານທາງເອເລັກໂຕຣນິກ, ເປັນລາຍລັກອັກສອນ ຫຼື ພາຫະນະສື່ມວນຊົນ. ກໍລະນີມີການປ່ຽນແປງຄ່າທຳນຽມ ຕ້ອງແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ແລະ ຜູ້ໃຊ້ບໍລິການ ຢ່າງໜ້ອຍ ສາມສິບວັນ ກ່ອນມີຜົນບັງຄັບໃຊ້.

**ມາດຕາ 32 ການແກ້ໄຂຂໍ້ຂັດແຍ່ງ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີລະບຽບການແກ້ໄຂຂໍ້ຂັດແຍ່ງ ຢ່າງເປັນລາຍລັກອັກສອນ ດັ່ງນີ້:

1. ກຳນົດຊ່ອງທາງ ໃນການຮັບຄຳສະເໜີ, ຄຳຄິດເຫັນ, ຂໍ້ຜິດພາດ ຫຼື ຄວາມບໍ່ເຂົ້າໃຈ ຈາກຜູ້ໃຊ້ບໍລິການ ເປັນຕົ້ນ ໝາຍເລກໂທລະສັບ, ທີ່ຢູ່ຂອງສຳນັກງານ ຫຼື ຈົດໝາຍເອເລັກໂຕຣນິກ ທີ່ສາມາດຕິດຕໍ່ໄດ້;

2. ກຳນົດວິທີການ, ຂັ້ນຕອນ ແລະ ເວລາ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ພ້ອມທັງຈັດຝຶກອົບຮົມວິທີການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ພະນັກງານທີ່ກ່ຽວຂ້ອງ. ສູນຊື້-ຂາຍເງິນຄຣິບໂຕ ຕ້ອງດຳເນີນການກວດສອບ ແລະ ແຈ້ງຄວາມຄືບໜ້າ, ຊີ້ແຈງຂັ້ນຕອນການດຳເນີນການແກ້ໄຂຕ່າງໆ ແລະ ໄລຍະເວລາໃນການແກ້ໄຂຄຳສະເໜີ ພາຍໃນເວລາ ເຈັດວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງ ກ່ຽວກັບຄຳສະເໜີ, ຄຳຄິດເຫັນ, ຂໍ້ຜິດພາດ ຫຼື ຄວາມບໍ່ເຂົ້າໃຈ ຈາກຜູ້ໃຊ້ບໍລິການ;

3. ດຳເນີນການແກ້ໄຂຄຳສະເໜີໃຫ້ສຳເລັດ ແລະ ແຈ້ງຜົນການດຳເນີນການໃຫ້ຜູ້ສະເໜີທັນທີພາຍຫຼັງແກ້ໄຂສຳເລັດ.

## ໝວດທີ 4
## ການຊອກຮູ້ລູກຄ້າ ແລະ ການຕ້ານ ສະກັດກັ້ນການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 33 ການຊອກຮູ້ລູກຄ້າ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງມີ ແລະ ປະຕິບັດຕາມກົນໄກການຊອກຮູ້ລູກຄ້າ ດັ່ງນີ້:

1. ຜູ້ໃຊ້ບໍລິການທີ່ເປັນນິຕິບຸກຄົນ ຕ້ອງມີເອກະສານຢັ້ງຢືນການສ້າງຕັ້ງ, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ;

2. ຜູ້ໃຊ້ບໍລິການທີ່ເປັນບຸກຄົນ ຕ້ອງມີອາຍຸ 18 ປີຂຶ້ນໄປ, ມີຄວາມສາມາດທາງດ້ານການປະພຶດ;

3. ມີການຢັ້ງຢືນຕົວຕົນດ້ວຍເອກະສານທີ່ອອກໃຫ້ໂດຍພາກສ່ວນກ່ຽວຂ້ອງຂອງລັດຖະບານ ສປປ ລາວ ຫຼື ຕ່າງປະເທດ ແລະ ຍັງມີອາຍຸນຳໃຊ້ໄດ້ຕາມກົດໝາຍ;

4. ການຢັ້ງຢືນຕົວຕົນດັ່ງກ່າວ ລະຫວ່າງເອກະສານ ແລະ ບຸກຄົນ ຫຼື ນິຕິບຸກຄົນທີ່ສະເໜີຂໍໃຊ້ບໍລິການສູນຊື້-ຂາຍເງິນຄຣິບໂຕ ຕ້ອງກົງກັນ ແລະ ບໍ່ອະນຸຍາດໃຫ້ສະໝັກນຳໃຊ້ແທນບຸກຄົນ ຫຼື ນິຕິບຸກຄົນອື່ນ.

**ມາດຕາ 34 ການຕ້ານ ສະກັດກັ້ນການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ສູນຊື້-ຂາຍຄຣິບໂຕ ເປັນໜຶ່ງໃນຫົວໜ່ວຍທີ່ມີໜ້າທີ່ລາຍງານ ຊຶ່ງຕ້ອງປະຕິບັດຕາມ ສິດ ແລະ ພັນທະຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ IV
## ການລາຍງານ, ການເປີດເຜີຍຂໍ້ມູນ ແລະ ການເກັບຮັກສາຂໍ້ມູນ

**ມາດຕາ 35 ການລາຍງານ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດລະບອບການລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ ເປັນປະຈຳວັນ, ອາທິດ, ເດືອນ, ໄຕມາດ ແລະ ປີ ໂດຍຮັບປະກັນຄວາມຄົບຖ້ວນ, ຖືກຕ້ອງ, ຈະແຈ້ງ ແລະ ທັນເວລາ ຕາມແບບຟອມການລາຍງານ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ.

**ມາດຕາ 36 ການເປີດເຜີຍຂໍ້ມູນ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງເປີດເຜີຍຂໍ້ມູນເອກະສານງານການເງິນ ປະຈຳໄຕມາດ, ປະຈຳປີ ແລະ ຂໍ້ມູນອື່ນ ທີ່ຊ່ວຍໃຫ້ມວນຊົນສາມາດເຫັນໄດ້ສະພາບຄວາມໝັ້ນຄົງ ຜ່ານເວັບໄຊຂອງຕົນ ຫຼື ຊ່ອງທາງອື່ນ ທີ່ມວນຊົນສາມາດເຂົ້າເຖິງໄດ້ ແລະ ຕ້ອງມີກົນໄກທີ່ເໝາະສົມ ເພື່ອແຈ້ງໃຫ້ຜູ້ໃຊ້ບໍລິການຂອງຕົນ ພ້ອມທັງແຈ້ງຊ່ອງທາງດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 37 ການເກັບຮັກສາຂໍ້ມູນ**

ສູນຊື້-ຂາຍເງິນຄຣິບໂຕ ຕ້ອງເກັບຮັກສາຂໍ້ມູນປະເພດເອກະສານ ກ່ຽວກັບການໃຫ້ບໍລິການ ເພື່ອອຳນວຍຄວາມສະດວກໃນການກວດກາ ໂດຍຕ້ອງເກັບຮັກສາໄວ້ຢ່າງໜ້ອຍຕາມໄລຍະເວລາທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ, ສຳລັບຂໍ້ມູນປະເພດເອເລັກໂຕຣນິກ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບປີ.

## ພາກທີ V
## ການໂຈະການດຳເນີນງານ ແລະ ການຖອນການອະນຸຍາດ

**ມາດຕາ 38 ການໂຈະການດຳເນີນງານຂອງສູນຊື້-ຂາຍເງິນຄຣິບໂຕ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາໂຈະການດຳເນີນງານຂອງສູນຊື້-ຂາຍເງິນຄຣິບໂຕ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄດ້ຮັບການອະນຸຍາດບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງໂດຍເຈດຕະນາ;
2. ຖືກດຳເນີນຄະດີໃນສະຖານສໍ້ໂກງ ຫຼື ຍັກຍອກຊັບ ຫຼື ການກະທຳຜິດທາງການເງິນ;

3. ການກວດສອບພາຍໃນ ຫຼື ການບໍລິຫານຄວາມສ່ຽງ ມີຂໍ້ມູນບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ;

4. ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດບັນຫາ, ຄວາມບົກພ່ອງໃນການໃຫ້ບໍລິການ;

5. ລະບົບຖືກໂຈມຕີທາງໄຊເບີ (Cyber Threat);

6. ຕາມການຕົກລົງຈາກອົງການທີ່ມີສິດອຳນາດ;

7. ກໍລະນີອື່ນ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ໃຊ້ບໍລິການ ຫຼື ຜູ້ເຂົ້າຮ່ວມໃນສູນຊື້-ຂາຍເງິນຄຣິບໂຕ.

ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງກ່ຽວກັບການໂຈະການດຳເນີນງານຂອງ ສູນຊື້-ຂາຍເງິນຄຣິບໂຕ ພ້ອມດ້ວຍເຫດຜົນ ແລະ ກຳນົດເວລາການແກ້ໄຂ.

ສູນຊື້-ຂາຍເງິນຄຣິບໂຕ ທີ່ຖືກໂຈະການດຳເນີນງານ ບໍ່ສາມາດໃຫ້ບໍລິການຈົນກວ່າໄດ້ຮັບການແກ້ໄຂສຳເລັດ ແລະ ໄດ້ຮັບຮອງຢ່າງເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 39 ການຖອນການອະນຸຍາດ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຖອນໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຂໍຖອນດ້ວຍຄວາມສະໝັກໃຈ;

2. ດຳເນີນທຸລະກິດ ບໍ່ປະຕິບັດຕາມແຜນ, ນະໂຍບາຍ, ມາດຕະການ ແລະ ລະບົບຕ່າງໆ ຕາມທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ຊຶ່ງເຮັດໃຫ້ສູນຊື້-ຂາຍເງິນຄຣິບໂຕດັ່ງກ່າວເກີດມີຄວາມສ່ຽງຮ້າຍແຮງ ຕໍ່ຜູ້ໃຊ້ບໍລິການ;

3. ຖືກສານຕັດສິນລົ້ມລະລາຍ;

4. ບໍ່ຕໍ່ໃບອະນຸຍາດ;

5. ບໍ່ສາມາດແກ້ໄຂ ຜົນການກວດກາ ຂອງຜູ້ຄຸ້ມຄອງ ຫຼື ຜົນການກວດສອບຂອງຜູ້ກວດສອບພາຍນອກຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

6. ບໍ່ສາມາດດຳເນີນທຸລະກິດ ໄດ້ຢ່າງເປັນປົກກະຕິ ເປັນເວລາ 06 ເດືອນ;

7. ຕາມການຕົກລົງຈາກອົງການທີ່ມີສິດອຳນາດ;

8. ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

ການຖອນການອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຕ້ອງປະຕິບັດພາຍຫຼັງສຳເລັດການຊຳລະສະສາງ (Liquidation) ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງການຖອນໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ສິບວັນ ຢ່າງຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຖອນການອະນຸຍາດ ເປັນຕົ້ນໄປ.

**ມາດຕາ 40 ການຊຳລະສະສາງ (Liquidation Procedure)**

ການຊຳລະສະສາງ ຕ້ອງດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ກໍລະນີ ການຂໍຖອນດ້ວຍຄວາມສະໝັກໃຈ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1.1. ສູນຊື້-ຂາຍເງິນຄຣິບໂຕ ໂດຍລັດຕິດແຜນດຳເນີນການຊຳລະສະສາງ, ນະໂຍບາຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໃຊ້ບໍລິການ, ໃບອະນຸຍາດ ແລະ ເອກະສານທີ່ກ່ຽວຂ້ອງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ທະນາຄານແຫ່ງ ສປປ ລາວ ຢ່າງໜ້ອຍ ສີ່ສິບຫ້າວັນ ກ່ອນການຢຸດຕິສູນຊື້-ຂາຍເງິນຄຣິບໂຕ;

1.2. ແຈ້ງການຍຸດຕິການໃຫ້ບໍລິການ ແກ່ຜູ້ໃຊ້ບໍລິການ ໂດຍຜ່ານພາຫະນະສື່ມວນຊົນ;

1.3. ລາຍງານຜົນການຊໍາລະສະສາງ ໃຫ້ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ຫ້າວັນ ນັບແຕ່ວັນສໍາເລັດການຊໍາລະສະສາງ.

2. ກໍລະນີທີ່ລະເມີດກົດໝາຍ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

2.1. ທະນາຄານແຫ່ງ ສປປ ລາວ ແຈ້ງຈຸດປະສົງການຖອນການອະນຸຍາດໃຫ້ແກ່ສູນຊື້-ຂາຍເງິນຄຣິບໂຕ;

2.2. ທະນາຄານແຫ່ງ ສປປ ລາວ ແຕ່ງຕັ້ງຄະນະສະເພາະກິດ ເພື່ອດໍາເນີນການຊໍາລະສະສາງ;

2.3. ຄະນະສະເພາະກິດ ດໍາເນີນການຊໍາລະສະສາງ ແລະ ລາຍງານຜົນ ໃຫ້ທະນາຄານແຫ່ງ ສປປ ລາວ;

2.4. ທະນາຄານແຫ່ງ ສປປ ລາວ ແຈ້ງການຖອນການອະນຸຍາດເປັນສູນຊື້-ຂາຍເງິນຄຣິບໂຕ ແລະ ແຈ້ງມວນຊົນຮັບຊາບ ຜ່ານພາຫະນະສື່ມວນຊົນ.

3. ກໍລະນີຖືກສານຕັດສິນລົ້ມລະລາຍ ໃຫ້ດໍາເນີນການຊໍາລະສະສາງ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ລາຍລະອຽດກ່ຽວກັບຂັ້ນຕອນການຊໍາລະສະສາງ ແມ່ນກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ການຄຸ້ມຄອງ ແລະ ການກວດກາ ສູນຊື້-ຂາຍເງິນຄຣິບໂຕ

### ມາດຕາ 41 ອົງການຄຸ້ມຄອງ ແລະ ກວດກາ ສູນຊື້-ຂາຍເງິນຄຣິບໂຕ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງທຸລະກິດການຊື້-ຂາຍເງິນຄຣິບໂຕຢ່າງລວມສູນ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຄຸ້ມຄອງລະບົບຊໍາລະສະສາງ ເປັນຜູ້ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕບົນພື້ນຖານການປະສານສົມທົບ ແລະ ແລກປ່ຽນຂໍ້ມູນຂ່າວສານກັບພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 42 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງລະບົບຊໍາລະສະສາງ

ກົມຄຸ້ມຄອງລະບົບຊໍາລະສະສາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ຕິດຕາມກວດກາ ຜູ້ເຂົ້າຮ່ວມການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໃນການຈັດຕັ້ງປະຕິບັດບັນດາຫຼັກການ, ມາດຕະຖານ ແລະ ລະບຽບການຕ່າງໆ ໃຫ້ສອດຄ່ອງຕາມລະບຽບກົດໝາຍ;

2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ບັນດານະໂຍບາຍ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໃຫ້ແທດເໝາະກັບສະພາບເສດຖະກິດ ແລະ ສາມາດເຊື່ອມໂຍງກັບສາກົນໃນແຕ່ລະໄລຍະ;

3. ພິຈາລະນາກໍານົດອັດຕາຄ່າບໍລິການໃນການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໃຫ້ເໝາະສົມກັບການຂະຫຍາຍຕົວຂອງເສດຖະກິດໃນແຕ່ລະໄລຍະ;

4. ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງຕ່າງໆ ລະຫວ່າງຜູ້ເຂົ້າຮ່ວມໃນການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

5. ສະເໜີຜູ້ເຂົ້າຮ່ວມການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕເພື່ອປັບປຸງ, ພັດທະນາ, ແກ້ໄຂບັນຫາຕ່າງໆ ກ່ຽວກັບການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕເພື່ອຮັບປະກັນຜົນສຳເລັດໃນການປະຕິບັດວຽກງານ;

6. ກຳນົດຫຼັກການ, ເງື່ອນໄຂເພີ່ມເຕີມ ຫຼື ຮຽກຮ້ອງຂໍ້ມູນເພີ່ມເຕີມ ກ່ຽວກັບການຄຸ້ມຄອງຜູ້ເຂົ້າຮ່ວມການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

7. ໂຄສະນາ, ເຜີຍແຜ່ນິຕິກຳ ແລະ ຂໍ້ມູນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໂດຍຜ່ານພາຫະນະສື່ມວນຊົນ;

8. ປະຕິບັດມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;

9. ປະສານສົມທົບກັບບັນດາຂະແໜງການຂອງລັດຖະບານ, ກົມກ່ຽວຂ້ອງຂອງ ທຫລ ເພື່ອຄຸ້ມຄອງວຽກງານການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 43 ເນື້ອໃນການກວດກາ**

ການກວດກາວຽກງານການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບສູນຊື້-ຂາຍເງິນຄຣິບໂຕ;

2. ການໃຫ້ບໍລິການຂອງ ສູນຊື້-ຂາຍເງິນຄຣິບໂຕ;

3. ວຽກງານອື່ນ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 44 ຮູບແບບການກວດກາ**

ຮູບແບບການກວດກາມີ ສອງ ຮູບແບບ ດັ່ງນີ້:

1. ການກວດກາຕາມເອກະສານ;

2. ການກວດກາກັບທີ່ ຊຶ່ງປະກອບມີ ສາມ ຮູບແບບຍ່ອຍຄື:

2.1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2.2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ສູນຊື້-ຂາຍເງິນຄຣິບໂຕ ຊາບລ່ວງໜ້າ;

2.3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ສູນຊື້-ຂາຍເງິນຄຣິບໂຕ ຊາບລ່ວງໜ້າ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 45 ຂໍ້ຫ້າມທົ່ວໄປ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫ້າມມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຫຼື ການໃຫ້ບໍລິການທີ່ຄ້າຍຄືກັນ ທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ;

2. ອອກເຄື່ອງມືກ່ຽວກັບການຊື້-ຂາຍຂອງສູນຊື້-ຂາຍເງິນຄຣິບໂຕ ທຸກປະເພດ ແລະ ຊັບສິນດີຈີຕອນປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

3. ແອບອ້າງ ຫຼື ໂຄສະນາ, ບິດເບືອນ ທີ່ສ້າງຜົນເສຍຫາຍຕໍ່ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ຜູ້ໃຊ້ບໍລິການສູນຊື້-ຂາຍເງິນຄຣິບໂຕ ແລະ ສ້າງຜົນເສຍຫາຍໃຫ້ແກ່ສັງຄົມ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ຂໍ້ຫ້າມສຳລັບສູນຊື້-ຂາຍເງິນຄຣິບໂຕ**

ຫ້າມສູນຊື້-ຂາຍເງິນຄຣິບໂຕ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບທຸລະກຳຂອງຜູ້ໃຊ້ບໍລິການ ຂອງຕົນໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງ ຫຼື ພັດທະນາພື້ນຖານໂຄງລ່າງ ທີ່ກ່ຽວຂ້ອງກັບການຊື້-ຂາຍເງິນຄຣິບໂຕ ທີ່ບໍ່ໄດ້ຮັບອະນຸຍາດ;

3. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນ ກ່ຽວກັບການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

4. ບິດເບືອນ, ປອມແປງເອກະສານ ຫຼື ຂໍ້ມູນ ກ່ຽວກັບທຸລະກຳການເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

5. ສະໜອງຂໍ້ມູນໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;

6. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;

7. ປັ່ນປ່ວນການດຳເນີນທຸລະກິດຂອງຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານຂອງຜູ້ກ່ຽວຂ້ອງ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 47 ຂໍ້ຫ້າມສຳລັບທະນາຄານທຸລະກິດທີ່ຮ່ວມມືກັບສູນຊື້-ຂາຍເງິນຄຣິບໂຕ**

ຫ້າມທະນາຄານທຸລະກິດທີ່ຮ່ວມມືກັບສູນຊື້-ຂາຍເງິນຄຣິບໂຕ ມີພຶດຕິກຳ ດັ່ງນີ້:

1. ອອກເຄື່ອງມືການຊຳລະທີ່ກ່ຽວຂ້ອງກັບ ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ໂດຍບໍ່ໄດ້ຮັບອະນຸຍາດ;

2. ໃຫ້ບໍລິການຊຳລະກ່ຽວຂ້ອງກັບ ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ;

3. ໃຫ້ບໍລິການຊຳລະກ່ຽວຂ້ອງກັບ ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ໂຄສະນາ;

4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວຂ້ອງກັບໃຫ້ບໍລິການແກ່ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;

5. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນກ່ຽວກັບການຊຳລະທີ່ກ່ຽວຂ້ອງກັບ ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

6. ດັດແປງ, ປອມແປງເອກະສານ ຫຼື ຂໍ້ມູນ ກ່ຽວກັບການຊຳລະກ່ຽວຂ້ອງກັບ ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

7. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ຂອງລັດໃນການກວດກາ, ເກັບກຳຂໍ້ມູນການໃຫ້ບໍລິການຊຳລະ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

8. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;

9. ປັ່ນປ່ວນຜູ້ເຂົ້າຮ່ວມທີ່ກ່ຽວຂ້ອງກັບການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ລະບົບການຊຳລະ;

10. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 48 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການຂອງສູນຊື້-ຂາຍເງິນຄຣິບໂຕ**

ຫ້າມຜູ້ໃຊ້ບໍລິການຂອງສູນຊື້-ຂາຍເງິນຄຣິບໂຕ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການບໍລິການຂອງສູນຊື້-ຂາຍເງິນຄຣິບໂຕ ເຂົ້າໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ເປີດບັນຊີ/ສະໝັກເປັນສະມາຊິກຕາງໜ້າບຸກຄົນ ນິຕິບຸກຄົນອື່ນ ທີ່ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານຂອງທຸລະກິດສູນຊື້-ຂາຍເງິນຄຣິບໂຕ;

2. ປັ່ນປ່ວນການດຳເນີນທຸລະກິດຂອງສູນຊື້-ຂາຍເງິນຄຣິບໂຕ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍຕໍ່ການດຳເນີນງານຂອງສູນຊື້-ຂາຍເງິນຄຣິບໂຕ;

3. ໃສ່ຮ້າຍປ້າຍສີຕໍ່ສູນຊື້-ຂາຍເງິນຄຣິບໂຕ ແລະ/ຫຼື ຜູ້ເຂົ້າຮ່ວມກັບວຽກງານດັ່ງກ່າວ;

4. ປະຕິເສດການຮ່ວມມື ໃນການກວດກາສູນຊື້-ຂາຍເງິນຄຣິບໂຕ ຂອງທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ພາກທີ VIII
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 49 ມາດຕະການຕໍ່ຜູ້ລະເມີດ**

ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການໃຫ້ບໍລິການດັ່ງກ່າວ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ດຳເນີນຄະດີ ຕາມກົດໝາຍ.

**ມາດຕາ 50 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ທີ່ລະເມີດຂໍ້ຕົກລົງສະບັບນີ້ເປັນຄັ້ງທຳອິດ ແລະ ບໍ່ສ້າງຄວາມເສຍຫາຍ ຈະຖືກມາດຕະການສຶກສາອົບຮົມຢ່າງເປັນລາຍລັກອັກສອນ.

**ມາດຕາ 51 ມາດຕະການກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ຈະຖືກກ່າວເຕືອນຢ່າງເປັນລາຍລັກອັກສອນ ຖ້າມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ລະເມີດຂໍ້ກຳນົດກ່ຽວກັບຖານະການເງິນ ແລະ ການດຳເນີນງານທີ່ໝັ້ນຄົງ, ມີຄວາມສ່ຽງທີ່ຈະບໍ່ສາມາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໄດ້ຢ່າງຕໍ່ເນື່ອງ ແລະ ມີຄວາມສ່ຽງທີ່ອາດກໍ່ໃຫ້ເກີດຄວາມເສຍ

ຫາຍຕໍ່ຜູ້ໃຊ້ບໍລິການ ເປັນຕົ້ນ ການປ່ຽນແປງຖານະທາງການເງິນ ແລະ ການດຳເນີນທຸລະກິດທີ່ຜ່ານມາ ແລະ ສ່ວນຂອງຜູ້ຖືຮຸ້ນທີ່ສົ່ງຜົນກະທົບຮ້າຍແຮງຕໍ່ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ.

**ມາດຕາ 52 ມາດຕະການປັບໃໝທາງບໍລິຫານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ທີ່ບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ຈະຖືກປັບໃໝ 1.000.000.000 ກີບ;

2. ການດຳເນີນທຸລະກິດ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ມີການ ຕົວະຂໍ້ມູນໃນທຸກຮູບແບບ ຈະຖືກປັບໃໝ ແຕ່ 70.000.000 ຫາ 100.000.000 ກີບ ຫຼື ສິບສ່ວນຮ້ອຍຂອງ ມູນຄ່າຄວາມເສຍຫາຍ. ໃນກໍລະນີ ທີ່ຍັງບໍ່ໄດ້ຮັບອະນຸຍາດ;

3. ຈະຖືກປັບໃໝ ແຕ່ 70.000.000 ຫາ 100.000.000 ກີບ ແລະ ຜູ້ມີສ່ວນຮ່ວມໂດຍກົງ ຈະຖືກ ປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ;

4. ການແຈ້ງ ຫຼື ເປີດເຜີຍຂໍ້ມູນບໍ່ຖືກຕ້ອງ ຊຶ່ງສົ່ງຜົນເສຍຫາຍຕໍ່ຜູ້ໃຊ້ບໍລິການ ຫຼື ປະຊາຊົນ ຈະຖືກ ປັບໃໝ ແຕ່ 10.000.000 ຫາ 25.000.000 ກີບ, ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບ ໃໝ ແຕ່ 5.000.000 ຫາ 15.000.000 ກີບ;

5. ການເປີດເຜີຍຂໍ້ມູນ ຫຼື ຄວາມລັບທາງການຄ້າ, ຂໍ້ມູນສ່ວນບຸກຄົນຂອງສູນຊື້-ຂາຍເງິນຄຣິບໂຕ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ຈະຖືກປັບໃໝ 50.000.000 ກີບ ຫຼື ສິບສ່ວນຮ້ອຍ ຂອງມູນຄ່າ ຄວາມເສຍຫາຍ;

6. ການເປີດເຜີຍ, ນຳໃຊ້, ສົ່ງຕໍ່ ຂໍ້ມູນສ່ວນບຸກຄົນຂອງຜູ້ໃຊ້ບໍລິການ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ຈະຖືກປັບໃໝ 50.000.000 ກີບຕໍ່ລາຍ ຫຼື ສິບສ່ວນຮ້ອຍ ຂອງມູນຄ່າຄວາມເສຍຫາຍ;

7. ບໍ່ບັນທຶກບັນຊີເງິນທີ່ໄດ້ຮັບຈາກຜູ້ໃຊ້ບໍລິການແຕ່ລະລາຍຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມ ຈຳນວນເງິນຈິງທີ່ຜູ້ໃຊ້ບໍລິການນຳເຂົ້າບັນຊີຜູ້ໃຊ້ເພື່ອຮອງຮັບການດຳເນີນທຸລະກຳ ຈະຖືກປັບໃໝ 50.000.000 ກີບ ຫຼື ຕາມມູນຄ່າເສຍຫາຍຕົວຈິງ;

8. ການລວມເອົາເງິນຈາກບັນຊີຂອງຜູ້ໃຊ້ບໍລິການ ເຂົ້າກັບບັນຊີຊັບສິນຂອງຕົນ ຈະຖືກປັບໃໝ ແຕ່ 20.000.000 ຫາ 50.000.000 ກີບ;

9. ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພບໍ່ສອດຄ່ອງກັບຮູບແບບຂະໜາດ, ປະລິມານທຸລະ ກຳ ຈະຖືກປັບໃໝ ແຕ່ 10.000.000 ຫາ 50.000.000 ກີບ;

10. ການບໍ່ດຳເນີນການປົກປ້ອງຜູ້ຊົມໃຊ້ຂອງຕົນ ເປັນຕົ້ນແມ່ນ ກຳນົດລະບຽບການໃຫ້ບໍລິການ ຊຳລະ, ການເປີດເຜີຍການປ່ຽນແປງລະບຽບການ, ການເກັບຮັກສາຂໍ້ມູນສ່ວນຕົວ, ການເປີດເຜີຍຄ່າທຳນຽມ ແລະ ການແກ້ໄຂຂໍ້ຂັດແຍ່ງ ຈະຖືກປັບໃໝ ແຕ່ 5.000.000 ຫາ 50.000.000 ກີບ;

11. ການລາຍງານບໍ່ສອດຄ່ອງຕາມໄລຍະເວລາທີ່ກຳນົດໄວ້ ຊັກຊ້າ ແຕ່ ໜຶ່ງ ຫາ ຫ້າວັນ ລັດຖະ ການ ຈະຖືກປັບໃໝ 3.000.000 ກີບຕໍ່ວັນ; ກໍລະນີຊັກຊ້າຫຼາຍກວ່າ ຫ້າວັນ ລັດຖະການ ຖືວ່າ ບໍ່ສົ່ງລາຍງານ ຈະຖືກປັບໃໝ 30.000.000 ກີບ;

12. ການເກັບຮັກສາຂໍ້ມູນ ໂດຍບໍ່ປະຕິບັດຕາມປະເພດເອກະສານ ຈະຖືກປັບໃໝ 5.000.000 ຫາ 10.000.000 ກີບ;

13. ການອອກເອກະສານຢັ້ງຢືນການດຳເນີນທຸລະກຳໃຫ້ແກ່ຜູ້ໃຊ້ບໍລິການ ໂດຍບໍ່ຖືກຕ້ອງກັບຂໍ້ມູນໃນລະບົບ ຫຼື ບໍ່ປະຕິບັດຕາມລະບຽບການທີ່ໄດ້ກຳນົດໄວ້ ຈະຖືກປັບໃໝ 5.000.000 ກີບ ຫຼື ສິບສ່ວນຮ້ອຍຂອງມູນຄ່າຄວາມເສຍຫາຍ;

14. ການໃຫ້ເຊົ່າ, ຢືມ ຫຼື ການມອບໂອນໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 50.000.000 ກີບ;

15. ການເປັນນາຍໜ້າສະເໜີຂໍອະນຸຍາດໃນນາມຕົນ ແຕ່ຕົວຈິງໄດ້ໃຫ້ຜູ້ອື່ນດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 50.000.000 ກີບ;

16. ການບໍ່ໃຫ້ຄວາມຮ່ວມມືໃນການກວດກາ ຂອງກົມຄຸ້ມຄອງລະບົບຊຳລະສະສາງ ຈະຖືກປັບໃໝ 10.000.000 ກີບ;

17. ການປະພຶດ ທີ່ເປັນການລະເມີດຕໍ່ສິດ ແລະ ຜົນປະໂຫຍດຂອງລູກຄ້າ, ການທຳລາຍຄວາມໝັ້ນຄົງໃນການດຳເນີນງານຂອງຜູ້ໃຫ້ບໍລິການ ແລະ ການລະເມີດອື່ນໆ ຈະຖືກປັບໃໝ 50.000.000 ກີບ;

18. ການນຳໃຊ້ເງິນຮັບລ່ວງໜ້າຂອງລູກຄ້າ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 50.000.000 ຫາ 80.000.000 ກີບ.

19. ການປະພຶດທີ່ເປັນການສ້າງໄພຄຸກຄາມຕໍ່ກັບລະບົບການທະນາຄານ-ເງິນຕາຂອງ ສປປ ລາວ ຈະຖືກປັບໃໝ ແຕ່ 100.000.000 ຫາ 1.000.000.000 ກີບ.

**ມາດຕາ 53 ມາດຕະການເພີ່ມ**

ສູນຊື້-ຂາຍເງິນຄຣິບໂຕ ທີ່ຖືກປະຕິບັດມາດຕະການປັບໃໝ ຈະຖືກປະຕິບັດມາດຕະການເພີ່ມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໂຈະການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ;
2. ຖອນໃບອະນຸຍາດ;
3. ມາດຕະການອື່ນ ຕາມການພິຈາລະນາ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 54 ມາດຕະການທາງແພ່ງ ແລະ ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍຕາມມູນຄ່າຕົວຈິງທີ່ຕົນໄດ້ກໍ່ຂຶ້ນ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ມີອົງປະກອບຂອງການກະທຳຜິດທາງອາຍາ ຈະຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 55 ຮູບແບບການປະຕິບັດມາດຕະການ**

ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຕ້ອງເຮັດເປັນລາຍລັກອັກສອນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ຜູ້ລະເມີດ;
2. ເນື້ອໃນຂອງການລະເມີດ;
3. ມາດຕະການທີ່ນຳໃຊ້;
4. ກຳນົດເວລາໃນການປັບປຸງແກ້ໄຂ;
5. ມາດຕະການຕໍ່ໜ້າ ຫາກສືບຕໍ່ມີການລະເມີດ.

ການຈັດຕັ້ງປະຕິບັດມາດຕະການ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 56 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງລະບົບຊໍາລະສະສາງ, ຜູ້ເຂົ້າຮ່ວມການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕເປັນເຈົ້າການປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 57 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**